ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 15: Animal Stories (Con.)

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ
**ລະຫັດ:** 0907108
**ບົດທີ 6:** ນິທານສັດ (ຕໍ່) ເວລາ: 90 ນາທີ
**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ
**ປີ:** 3
**ພາກຮຽນ:** 1
**ສົກຮຽນ:** 2023-2024

<table>
<tr><td colspan="2">ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)</td></tr>
<tr><td colspan="2">ສ້າງເປົ້າໝາຍ (Goals):<br>ນັກຮຽນຈະຮູ້:<br>- ນິທານເລື່ອງ “ເສືອເຖົ້າຈຳສິນ”<br>- ນິທານເລື່ອງ “ຊ້າງກັບນົກກະຈອກຟ້າ”</td></tr>
<tr><td>ຄວາມເຂົ້າໃຈ (Understand):<br>ນັກຮຽນຈະເຂົ້າໃຈ:<br>- ນິທານເລື່ອງ “ເສືອເຖົ້າຈຳສິນ”<br>- ນິທານເລື່ອງ “ຊ້າງກັບນົກກະຈອກຟ້າ”</td><td>ຄຳຖາມຫຼັກ (Questions):<br>1) ນິທານເລື່ອງ “ເສືອເຖົ້າຈຳສິນ” ມີເນື້ອໃນແນວໃດແດ່?<br>2) ນິທານເລື່ອງ “ຊ້າງກັບນົກກະຈອກຟ້າ” ມີເນື້ອໃນແນວໃດ?</td></tr>
<tr><td>ຄວາມຮູ້ (Knowledge):<br>- ໃຫ້ນັກຮຽນຮູ້ໄດ້ເຖິງເນື້ອໃນນິທານເລື່ອງ “ເສືອເຖົ້າຈຳສິນ” ແລະເນື້ອໃນນິທານເລື່ອງ “ຊ້າງກັບນົກກະຈອກຟ້າ”.</td><td>ທັກສະ (Skills):<br>- ອະທິບາຍໄດ້ເຖິງເນື້ອໃນນິທານເລື່ອງ “ເສືອເຖົ້າຈຳສິນ” ແລະເນື້ອໃນນິທານເລື່ອງ “ຊ້າງກັບນົກກະຈອກຟ້າ”.</td></tr>
<tr><td colspan="2">ຂັ້ນຕອນ 2 - ຫຼັກຖານປະເມີນ</td></tr>
<tr><td>ໜ້າວຽກສິດສອນ (Tasks):<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ</td><td>ຫຼັກຖານອື່ນໆ (Other Evidence):<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ</td></tr>
</table>

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

**ສື່ການສອນມີ:**

ປຶ້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປຶ້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ວັນນະຄະດີຊັ້ນມັດທະຍົມປີທີ5, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.

**ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**ທວນຄືນບົດຮຽນເກົ່າ**

ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ, ການຂະຫຍາຍຕົວ, ເນື້ອໃນ ແລະ ສິລະປະຂອງນິທານສັດ.

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 6**

**ນິທານສັດ (ຕໍ່)**

**5. ນິທານເລື່ອງ "ເສືອເຖົ້າຈຳສິນ"** ( 15 ນາທີ )

**<u>ກິດຈະກຳ 1:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

1) ນິທານເລື່ອງ "ເສືອເຖົ້າຈຳສິນ" ມີເນື້ອໃນແນວໃດແດ່?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ໃນປ່າແຄມຝັ່ງນ້ຳແຫ່ງໜຶ່ງ, ມີເສືອເຖົ້າໂຕໜຶ່ງເປັນພະຍາຂອງສັດທັງຫຼາຍຢູ່ໃນປ່ານັ້ນ. ເສືອເຖົ້າມີຄວາມລຳບາກເມື່ອຍລ້າໃນການອອກໄປຈັບສັດອື່ນມາກິນເປັນອາຫານ. ມີມື້ໜຶ່ງ ມັນຈຶ່ງຮຳເພິງໃນໃຈວ່າ : ເມື່ອກູ້ເປັນພະຍາຄຸ້ມຄອງສັດທັງຫຼາຍຢູ່ໃນປ່ານີ້ແລ້ວ, ຈັກຂົບຄາບກິນເຂົາເສຍ ໂດຍເປີດເຜີຍກໍ່ເປັນການບໍ່ສົມຄວນ. ສັດທັງຫຼາຍຕິຕຽນທານຂວັນກູໄດ້, ກູຄວນຫາ ອຸບາຍ ຢ່າງໃດຢ່າງໜຶ່ງ;ຄິດແລ້ວຈຶ່ງໃຫ້ສັດທັງຫຼາຍມາປະຊຸມ ແລ້ວ ເສືອເຖົ້າກ່າວວ່າ: ດູລາເພື່ອນທັງຫຼາຍ, ແຕ່ກ່ອນເມື່ອກູຍັງບໍ່ທັນເຖົ້າແກ່ຫຼາຍ, ຫູຕາກູຍັງແຈ້ງໃສດີ, ທັງມີກຳລັງວັງຊາກໍ່ຍັງແຂງແຮງ ຈຶ່ງສາມາດປົກຄອງໝູ່ເພື່ອນທັງຫຼາຍໃຫ້ຢູ່ເຢັນເປັນສຸກໄດ້. ບາດນີ້ກູກໍ່ເຖົ້າແກ່ແລ້ວ, ຫູຕາກໍບໍ່ດີ, ກຳລັງວັງຊາກໍ່ຖ້ອຍຫຼາຍ ກູຈຶ່ງຄິດຢາກເຊົາພັກຜ່ອນ ຈຳສິນພາວະນາ, ແຜ່ເມດຕາຄວາມສຸກເພື່ອເປັນການບັນເທົາໂທດທີ່ໄດ້ເຮັດມາແລ້ວເມື່ອຕອນຍັງໜຸ່ມອີກດ້ວຍ. ດັ່ງນັ້ນສູ່ທັງຫຼາຍຢ່າໄດ້ມາກຸກກວນກູ, ເວັ້ນແຕ່ເວລາໃດສູ່ຫາກຜິດຖຽງກັນເປັນຖ້ອຍເປັນຄວາມກັນຈຶ່ງເຂົ້າມາຫາກູ, ກູຈະພິຈາລະນາພິພາກສາ. ເສືອກ່າວດັ່ງນັ້ນ, ກໍເຮັດອາການ ເໝືອນດັ່ງຈຳສິນ, ສະແດງຕົນເປັນຜູ້ບໍລິສຸດຢູ່ໃຕ້ຕົ້ນໄມ້ຕົ້ນໜຶ່ງ.

ຕໍ່ມາມີກະຕ່າຍ ໂຕໜຶ່ງອາໄສຢູ່ໃນ ໂພນປວກນ້ອຍໜ່ວຍໜຶ່ງໃນປ່ານັ້ນ.ວັນໜຶ່ງກະຕ່າຍອອກໄປຫາກິນ, ນົກກະທາໂຕໜຶ່ງເຫັນໂພນປວກນັ້ນ, ເປັນໜ້າສຳລານ ມີອາຫານບໍລິສຸດ ແລະ ສົມບູນດີ ຈຶ່ງເຂົ້າໄປນອນອາໄສຢູ່. ເມື່ອ

ກະຕ່າຍກັບມາເຫັນນົກກະທາຢູ່ແທນບ່ອນດັ່ງນັ້ນຈຶ່ງຄຽດ, ຈຶ່ງກ່າວວ່າ: ດູລານົກກະທາ ເຫດໃດມຶງຈຶ່ງມາຢູ່ບ່ອນກູ້ ! ໂພນໜ່ອຍນີ້ເປັນຂອງກູ, ກູຢູ່ມາແຕ່ເຫິງແລ້ວ, ມຶງຈົ່ງອອກໜີໄປຢູ່ບ່ອນອື່ນດຽວນີ້. ນົກກະທາຕອບວ່າ: ເຮີຍ ກະຕ່າຍ ! ຖ້າກູມານີ້ເຫັນມຶງແລ້ວ ກູມາແຍ້ມາຊິງເອົາດັ່ງນັ້ນ, ກໍ່ແມ່ນກູ້ເປັນຜູ້ຮາຍມາຍາດບ່ອນມຶ່ງແທ້, ແຕ່ກູນີ້ ກູມາບໍ່ເຫັນໃຜເຫັນແຕ່ໂພນເປົ່າໆ, ກູຈຶ່ງເຂົ້າຢູ່ ເຫດໃດມຶງຈຶ່ງວ່າກູມາຍາດທີ່ດິນທີ່ຢູ່ຂອງມຶງ. ນົກກະທາ ແລະ ກະຕ່າຍຖຽງກັນໄປມາຫາຜູ້ຕັດສິນບໍ່ໄດ້ ສອງເຂືອຈຶ່ງພ້ອມກັນໄປຫາເສືອເຖົ້າ ໃຫ້ຕັດສິນ, ເລົ່າເຫດການ ທີ່ຜິດຖຽງກັນໃຫ້ເສືອເຖົ້າຟັງ, ເສືອເຖົ້າຈຶ່ງ ວ່າລູກທັງສອງຢູ່ໄກໂພດ ພໍ່ນີ້ເຖົ້າແກ່ຫຼາຍແລ້ວຫູຕາບໍ່ສູ້ດີ, ເວົ້າຢູ່ໄກບໍ່ໄດ້ ຍິນຂໍເຊີນຫຍັບເຂົ້າມາໃກ້ໆຈັກໜ້ອຍແດ່. ພໍກະຕ່າຍກັບນົກກະທາຫຍັບເຂົ້າມາໃກ້, ເສືອເຖົ້າກໍ່ຄຸບເອົາສັດທັງສອງນັ້ນມາກິນເສຍ (ກຽງແກ້ວ ນວນນະວົງ ແລະຄະນະ, 2002).

**6. ນິທານເລື່ອງ "ຊ້າງກັບນົກກະຈອກຟ້າ"** (10 ນາທີ)

<u>**ກິດຈະກຳ 2:**</u>

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

  1) ນິທານເລື່ອງ "ຊ້າງກັບນົກກະຈອກຟ້າ" ມີເນື້ອໃນແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (5 ນາທີ)

ແຕ່ກີ້ແຕ່ກ່ອນໄດ້ມີນົກຈອກຜົວເມຍຄູ່ໜຶ່ງເຮັດຮັງຢູ່ປ່າໄຜ່ແຫ່ງໜຶ່ງ. ຄັ້ງນັ້ນມີຊ້າງສານຕົວໜຶ່ງເລາະຊອກຫາກິນມາທາງນັ້ນ. ນາງນົກຈອກຢ້ານຊ້າງດຶງຮຽວໄຜ່ທີ່ຮັງຂອງຕົນຢູ່ຈຶ່ງອອນວອນຊ້າງວ່າ

- ເຈົ້າກູ້ຜູ້ປະເສີດ ທີ່ນີ້ເປັນບ່ອນອາໄສຂອງຂ້າພະເຈົ້າ ແລະ ເວລານີ້ລູກຂອງຂ້າພະເຈົ້າກໍ່ຍັງ ອ່ອນນ້ອຍບິນຍັງບໍ່ທັນໄດ້, ຂໍທ່ານນຳເຈົ້າກູ້ຢ່າໄປດຶງຮຽວໄຜ່ທ້ອນ, ກະລຸນາຫຼີກໄປທາງອື່ນສາ ຊ້າງໄດ້ຍິນນົກຈອກເວົ້າດັ່ງນັ້ນກໍ່ອວດສຳຫາວວ່າຕົນມີກຳລັງຕອບນາງນົກຈອກດ້ວຍລັກສະນະຂົ່ມຂູ່ແບບຜູ້ມີອຳນາດວ່າ

- ບະ! ອີ່ນາງນົກນ້ອຍເຫດໃດມຶງຈຶ່ງມາເຮັດຮັງກີດຂວາງຢູ່ບ່ອນຫາກິນຂອງກູ, ທີ່ປ່ານີ້ແມ່ນເຂດແດນຂອງກູ້ໝົດ, ໃຜຈະມາສະແດງຄວາມໃຫຍ່ໂຕຢູ່ບ່ອນຫາກິນຂອງກູແມ່ນບໍ່ໄດ້ເດັດຂາດ ວ່າແລ້ວກໍເອົາງວງດຶງຮຽວໄຜ່ບ່ອນທີ່ນົກເຮັດຮັງໃສ່ນັ້ນມາຍໍ່າຍີ ຢຽບລູກອ່ອນຂອງນາງແປກັບດິນແລ້ວກໍ່ໜີໄປ.

ນາງນົກມີຄວາມໂສກເສົ້າເສຍໃຈເປັນອັນມາກຈຶ່ງໜ່ຽວອອນນົກຕົວຜົວວ່າ:

- ເຮັດຈັ່ງໃດເຮົາຈຶ່ງຈະແກ້ແຄ້ນສັດໂຫຍກຮ້າຍຕົວໃຫຍ່ນີ້ໄດ້. ນົກຕົວຜົວເຫັນເມຍທຸກໂສກດັ່ງນັ້ນຈຶ່ງພາກັນໄປປຶກສານຳສ່ຽວກາ, ເລົ່າເຫດການກ່ຽວກັບຄວາມໂຫຍດຮ້າຍຂອງຊ້າງໃຫ້ກາຟັງຈົນຕະຫຼອດ, ກາຈຶ່ງເວົ້າອອຍໃຈຜົວເມຍນົກຈອກ ແລະ ແນະນຳວ່າ:

- ຄວນຫາທາງຕໍ່ສູ້ກັບສັດຕູ້ນັ້ນ, ເຮົາເອງກໍ່ຈະຊ່ອຍສຸດຄວາມສາມາດ ວ່າແລ້ວກໍ່ແນະນຳໃຫ້ສ່ຽວກົບອີກເມື່ອໄປເຖິງກົບ ເຂົາກໍເລົ່າເຫດການໃຫ້ກົບຟັງພ້ອມທັງຂໍໃຫ້ສ່ຽວກົບຊ່ອຍເຫຼືອ. ເມື່ອກົບໄດ້ຟັງດັ່ງນັ້ນກໍມີຄວາມເຫັນໃຈນຳຄູ່ຜົວເມຍນົກຈອກເປັນອັນມາກແລ້ວຈຶ່ງເວົ້າໃຫ້ກຳລັງໃຈວ່າ:

- ສ່ຽວເອີຍ ! ຊ້າງໂຕນັ້ນມັນອວດສະຫາວອ້າງຕົວວ່າເປັນສັດໃຫຍ່ ແລະ ມີກຳລັງຫຼາຍໃຜບໍ່ອາດສູ້ມັນໄດ້, ມັນມັກຂົ່ມເຫັງຜູ້ມີກຳລັງນ້ອຍ, ທີ່ແທ້ນັ້ນຜູ້ມີກຳລັງນ້ອຍ ຫຼື ບໍ່ມີກຳລັງ. ແຕ່ວ່າຜູ້ມີພະຫຍາປັນຍາທີ່ສ້ຽມແຫຼມ,ມີກົນອຸບາຍທີ່ສະຫຼາດກໍສາມາດເອົາຊະນະຜູ້ມີກຳລັງໄດ້.

ດັ່ງນັ້ນ, ພວກເຮົາຄວນພ້ອມພຽງກັນຄິດຫາອຸບາຍກຳຈັດຊ້າງຕົວນັ້ນໃຫ້ໄດ້ເພາະເພິ່ນວ່າ: ຄວາມສາມັກຄີໂຮມກຳລັງກັນຂອງສິ່ງເລັກນ້ອຍກໍສາມາດເຮັດໃຫ້ວຽກງານທຸກຢ່າງຕ້ອງສຳເລັດຜົນຕາມປະສົງຄືກັບຫຍ້າທີ່ຝັ້ນກັນເປັນເຊືອກກໍສາມາດຜູກຊ້າງສານທີ່ມີກຳລັງແຮງໄດ້, ອັນກຳລັງແຮງຂອງໝູ່ບໍ່ມີແນວໃດຈະທຳລາຍໄດ້ດອກສ່ຽວເອີຍ.

ຫຼັງຈາກ ນົກຈອກ, ກາ ແລະ ກົບ ຈຶ່ງພາກັນໄປຫາແມງວັນຂຽວອີກ, ເມື່ອໄປເຖິງຈຶ່ງເລົ່າເຫດການທຸກຢ່າງໃຫ້ສ່ຽວແມງວັນຟັງ, ແມງວັນຂຽວຈຶ່ງເວົ້າວ່າ:

- ດີແລ້ວສ່ຽວເອີຍ! ຖ້າພວກເຮົາພ້ອມພຽງກັນກໍຕ້ອງປາບຊ້າງຕົວນັ້ນໄດ້ແທ້, ແຕ່ເຮົາຕ້ອງມີອຸບາຍທີ່ສະຫຼາດຈຶ່ງປາສະຈາກຄວາມວິບັດເສຍຫາຍໄດ້.

- ພວກເຮົາຕ້ອງຫາອຸບາຍທີ່ແນບນຽນ ປາສະຈາກຄວາມເສຍຫາຍໄດ້. ຄັນແລ້ວຈຶ່ງຊວນເອົາສ່ຽວທັງໝົດໄປຫານົກຫອນຂວານ (ນົກໃສ່) ເລົ່າເຫດການທຸກຢ່າງໃຫ້ຟັງ ນົກໃສ່ໄດ້ເວົ້າວ່າ:

- ພວກເພື່ອນມາຂໍຄວາມຊ່ວຍເຫຼືອເທື່ອນີ້ເຮົາບໍ່ຂືນ ແລະ ຍິນດີຊ່ວຍເຫຼືອ.

ເມື່ອສັດເຫຼົ່ານັ້ນປຶກສາຕົກລົງກັນແລ້ວ ກໍ່ໄປຈັດການກັບຊ້າງຕາມນັດໝາຍ; ໃຫ້ກາກັບນົກຫົວຂວານ ແລະ ນົກຈອກ ໄປລອບສັບຕາຊ້າງໃນເວລາມັນນອນຫຼັບ, ຕາຊ້າງເປັນບາດແລ້ວໃຫ້ແມງວັນຂຽວໄປໄຂ່ໃສ. ເມື່ອຕາຊ້າງບອດເພາະໜອນເຈາະແລ້ວຈຶ່ງພາກັບໄປບອກສ່ຽວກົບ, ໃຫ້ສ່ຽວກົບພາບໍລິວານໄປຮ້ອງທີ່ປາກເຫວ, ຊ້າງສານຕາບອດອຶດຫຍ້າ ແລະ ນ້ຳມາຫຼາຍວັນ, ຄັນໄດ້ຍິນສຽງຮ້ອງເຂົ້າໃຈວ່າມີໜອງນ້ຳຢູ່ທາງສຽງນັ້ນຈຶ່ງຍ່າງຊັດເຊ ງົມງວາໄປທີ່ປາກເຫວເລີຍພະລາດຕົກເຫວຕາຍ (ພູວົງ ໝໍ່ດາລາ ແລະຄະນະ, 2018).

**III. ຂັ້ນສະຫຼຸບ**

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ນິທານເລື່ອງ "ເສືອເຖົ້າຈຳສິນ"
  - ນິທານເລື່ອງ "ຊ້າງກັບນົກກະຈອກຟ້າ"

**IV. ວັດ ແລະ ປະເມີນ**

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

**V. ຂັ້ນຕັກເຕືອນ**

- ຄູແນະນຳນັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2002). ວັນນະຄະດີພື້ນເມືອງ 1 ລະຫັດ 630LLI 322. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈຳວິຊາ



ປທ. ສົມທະເພີຍ ສີວົງສັກ